**Topic:**

Achieving the Lao-Thai Trade Target

**Summary:**

Thailand from the early time has been the first strategic trading partner for Lao PDR both in terms of exports and imports, covering most of tariff lines. Each year, a bilateral trade value between the two countries increases incessantly with a rapid speed.

**Content:**

**A**dmittedly, Thailand from the early time has been the first strategic trading partner for Lao PDR both in terms of exports and imports, covering most of tariff lines. Each year, a bilateral trade value between the two countries increases incessantly with a rapid speed. Due to the two governments' close attention, similar traditions and dialogues, and the enthusiasm of the businessmen of the two nations in doing business together, the bilateral trade relation has been consistently intensified, progressing towards new quality overtime.

The success of Lao-Thai bilateral trade enrichment particularly in the last five years is manifestly explained with trade statistics. In 2007, trade value reached only USD 1.78 billion, but in 2011 it rose to more than USD 3.9 billion, of which Laos' exports to Thailand accounted for more than USD 1 billion. Over the past ten months of 2012, we have already witnessed the extremely large value of trade of USD 4 billion, which is even larger than the whole trade value of its preceding year. Such growth is enormous with an increasing rate of over 30% a year and has shown significance reflecting a unique feature of trade cooperation between the two countries, which none of other Laos' trading partners could do at the moment.

Various activities and cooperation plans are fashioned to stimulate and push forward such relation. The governments through the mechanism of Cooperative Plan Meeting between the Ministry of Industry and Commerce of the Laos and the Ministry of Commerce of Thailand, mutually set a bilateral trade target to be achieve by 2015 at USD 5.77 billion, in which Laos' exports to Thailand must be tripled or reached USD 2.2 billion by 2015 comparing with that of 2010.

There is a great potential that the target will be fulfilled. This is because Lao economic sectors have constantly expanded with an annual growth rate of more than 8 per cent, particularly in sectors of mining, hydropower, infrastructures, services, and industrial and agricultural productions.

| HSC | Product descriptions | Lao PDR's exports to Thailand (in thousand US dollars) | | | |
|---|---|---|---|---|---|
| | | 2009 | 2010 | 2011 | 6m / 2012 |
| 7403.11 | Copper cathodes and sections of cathodes unwrought | 229,015 | 308,792 | 498,936 | 284,816 |
| 2716.00 | Electrical energy | 92,799 | 272,069 | 455,901 | 224,219 |
| 4407.99 | Lumber, non-coniferous nes | 42,533 | 35,705 | 35,573 | 21,048 |
| 1005.90 | Maize (corn) nes | 19,888 | 19,757 | 20,747 | 16,948 |
| 2701.19 | Coal nes, whether or not pulverized but not agglomerated | 9,859 | 12,256 | 12,486 | 7,193 |
| 3105.90 | Fertilizers nes, in packages not exceeding 10 kg | 0 | 1,040 | 9,601 | 2,836 |
| 0704.90 | Cabbages, kohlrabi, sim edible brassicas nes, fresh/chilled | 2,931 | 4,357 | 9,402 | 3,421 |
| 4407.29 | Lumber, tropical hardwood nes, sawn lengthwise >6mm | 7,505 | 9,202 | 9,041 | 7,058 |
| 8544.30 | Ignition wirg sets&oth wirg sets usd in vehicles,aircraft etc | 5,130 | 10,163 | 8,224 | 4,269 |
| 1202.20 | Ground-nuts shelld, whether or not broken, not roastd | 1,845 | 915 | 5,412 | 0 |

***Source**: International Trade Center. www.trademap.org*

| HSC | Product descriptions | Lao PDR's imports from Thailand (in thousand US dollars) | | | |
|---|---|---|---|---|---|
| | | 2009 | 2010 | 2011 | 6m 2012 |
| 2710.19 | Light petroleum distillates nes | 244,252 | 346,534 | 506,440 | 369,770 |
| 2710.11 | Aviation spirit | 81,833 | 115,142 | 164,326 | 0 |
| 8703.33 | Automobiles with diesel engine displacing more than 2500 cc | 47,563 | 65,086 | 66,668 | 44,057 |
| 2716.00 | Electrical energy | 58,045 | 102,057 | 65,811 | 39,338 |
| 0207.14 | Fowls (gallus domesticus), cuts & offal, frozen | 0 | 15,101 | 64,492 | 28,210 |
| 8703.32 | Automobiles with diesel engine displacing > 1500 cc - 2500 cc | 42,790 | 53,594 | 51,715 | 7,137 |
| 8429.52 | Shovels and excavators with a 360 revolving superstructure | 24,553 | 30,429 | 50,269 | 27,284 |
| 8704.10 | Dump trucks designed for off-highway use | 8,612 | 9,884 | 40,730 | 6,089 |
| 2202.90 | Non-alcoholic beverages nes,excludg fruit/veg juices of headg 20.09 | 37,391 | 26,676 | 38,552 | 34,853 |
| 8701.90 | Wheeled tractors nes | 8,605 | 18,076 | 36,749 | 20,926 |

Such development is against the recovery of world economy, which is still affected by the financial crisis in the Euro zone. The socio-economic development in Lao PDR will significantly contribute to vast increases in both imports and exports of goods and services. With a unique of geological characteristics of Laos and other facilitating factors including transportation and customary practices, it is likely that such demand and supply for goods and services would mostly be attached to Thai importing and exporting markets. Principally, Lao-Thai provinces along the borders have organized frequent exchanges of delegations, products exhibitions, and business matching meetings allowing businesses to seek close cooperation among themselves with an involvement of concerned public authorities of the two countries, and provide assistance for trade development. In addition, joining the ASEAN Economic Community by Laos in 2015 and establishment of various Lao-Thai friendship bridges will even facilitate more free flows of goods under the "Single Market" concept. Therefore, for a great degree it can be predicted that the Lao-Thai trade target of USD 5.77 billion will be realized assuredly by 2015.

However, boosting the Laos' exports to Thailand by threefold or to approximately USD 2.2 billion is still challenging and considerably tough for both countries. Unlike its imports from Thailand, most of Laos' exports to Thailand are in a form of raw materials which are less processed and unsustainable especially minerals (copper, coal) products, wood products, etc... Apart from that, Lao PDR will be a member of the World Trade Organization early 2013. Exporting markets for Lao PDR will consequently be expanded, meaning that exporters' dependence on one market will be reduced and that they can choose which market they will export to maximize profits. This, anyhow, does not necessarily mean that such export target will not be reached. But it requires the two countries to work harder on close consultations so as to find out suitable trade promotion measures and on implementing commitments in agreements and conventions of which both sides are signatories, particularly those under ASEAN and the World Trade Organization agreements. This is to ensure that the development of Lao-Thai trade relation which already has a profound foundation from the past will be sustainable and experience a higher quality.

**Source:**

http://laoftpd.com/index.php?option=com_content&view=article&id=109%

**ຫົວຂໍ້ຂ່າວ**

ລາວ - ໄທ ບັນລຸເປົ້າໝາຍທາງດ້ານການຄ້າຮ່ວມກັນ

**ຂ່າວຫຍໍ້:**

ໃນອາດີດຜ່ານມາ ລາຊະອານາຈັກໄທ ຖືວ່າເປັນຄູ່ຄ້າຍຸດທະສາດ ອັນດັບໜຶ່ງຂອງ ສປປ ລາວ ທັງດ້ານການນຳເຂົ້າ ແລະ ສົ່ງອອກ, ຊຶ່ງລວມເອົາເກືອບທຸກລາຍການສິນຄ້າ. ໃນແຕ່ລະປີ, ມູນຄ່າການຄ້າສອງຝ່າຍລະຫວ່າງ 2 ປະເທດ ເພີ່ມຂຶ້ນຢ່າງໄວວາ.

**ເນື້ອໃນ:**

ຕ້ອງຍອມຮັບວ່າ ໃນໄລຍະຜ່ານລາຊະອານາຈັກໄທ ຖືວ່າເປັນຄູ່ຄ້າຍຸດທະສາດ ອັນດັບໜຶ່ງຂອງ ສປປ ລາວ ທັງດ້ານການນຳເຂົ້າ ແລະ ສົ່ງອອກ, ຊຶ່ງລວມເອົາເກືອບທຸກລາຍການສິນຄ້າ. ໃນແຕ່ລະປີ, ມູນຄ່າການຄ້າສອງຝ່າຍ ລະຫວ່າງ 2 ປະເທດ ເພີ່ມຂຶ້ນຢ່າງໄວວາ. ສ່ວນໜຶ່ງເນື່ອງຈາກວ່າ ລັດຖະບານຂອງທັງສອງປະເທດໄດ້ເອົາໃຈໃສ່ສາຍພົວພັນລະຫວ່າງປະເທດ, ມີຮີດຄອງປະເພນີ, ວັດທະນາທຳ ແລະ ພາສາປາກເວົ້າທີ່ຄ້າຍຄືກັນ. ພ້ອມນັ້ນ ນັກທຸລະກິດຍັງມີຄວາມກະຕືລືລົ້ນ ດຳເນີນທຸລະກິດການຄ້າຮ່ວມກັນ, ສາຍພົວພັນການຄ້າສອງຝ່າຍແມ່ນມີຄວາມສະໜິດແໜ້ນ ແລະ ມີທ່າກ້າວໃໝ່ທີ່ຈະສືບຕໍ່ຂະຫຍາຍໂຕໃນຕໍ່ໜ້າ.

ຄວາມສຳເລັດຂອງການຄ້າສອງຝ່າຍ ລາວ-ໄທ ໄດ້ຂະຫຍາຍໂຕເປັນພິເສດ ໃນໄລຍະ 5 ປີຜ່ານມາ ຊຶ່ງສະແດງອອກຢ່າງຈະແຈ້ງໃນສະຖິຕິການຄ້າສອງຝ່າຍ. ໃນປີ 2007, ມູນຄ່າການຄ້າມີພຽງແຕ່ 1.78 ຕື້ໂດລາສະຫະລັດ, ແຕ່ໃນປີ 2011 ໄດ້ຂຶ້ນຫລາຍກວ່າ 3.9 ຕື້ໂດລາສະຫະລັດ, ເຊິ່ງການສົ່ງອອກຂອງ ສປປ ລາວໄປໄທ ມີມູນຄ່າຫລາຍກວ່າ 1 ຕື້ໂດລາສະຫະລັດ. ຕະຫລອດໄລຍະ 10 ເດືອນ ຂອງປີ 2012, ພວກເຮົາໄດ້ຮັບຮູ້ກ່ຽວກັບມູນຄ່າການຄ້າທີ່ມະຫາສານ ສູງເຖິງ 4 ຕື້ໂດລາສະຫະລັດ ເຊິ່ງເປັນມູນຄ່າທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດ. ອັດຕາການເພີ່ມຂຶ້ນຢ່າງມະຫາສານ ຫຼາຍກວ່າ 30% ຕໍ່ປີ ໄດ້ກາຍເປັນຕົວບົ່ງຊີ້ເຖິງຂີດໝາຍຂອງການຮ່ວມມືທາງດ້ານການຄ້າ ລະຫວ່າງສອງປະເທດ, ທີ່ຍັງບໍ່ທັນມີຄູ່ຮ່ວມການຄ້າໃດຂອງລາວສາມາດບັນລຸໄດ້ຈົນເຖິງປະຈຸບັນ.

ລັດຖະບານຂອງສອງປະເທດ ມີຫລາຍໆກິດຈະກຳ ແລະ ແຜນການຮ່ວມມືເພື່ອຊຸກຍູ້ ແລະ ສະໜັບສະໜູນສາຍພົວພັນຮ່ວມມື ໂດຍຜ່ານກົນໄກຂອງກອງປະຊຸມແຜນການຮ່ວມມື ລະຫວ່າງ ກະຊວງອຸດສາຫະກຳ ແລະການຄ້າ ສປປ ລາວ ແລະ ກະຊວງພານິດໄທ, ທັງສອງຝ່າຍໄດ້ຕັ້ງເປົ້າໝາຍມູນຄ່າການຄ້າສອງຝ່າຍໃຫ້ບັນລຸ 5.77 ຕື້ໂດລາສະຫະລັດ ໃນປີ 2015, ໃນນີ້ ການສົ່ງອອກຂອງ ສປປ ລາວ ໄປລາດຊະອານາຈັກໄທຈະຕ້ອງເພີ້ມຂຶ້ນ 3 ເທົ່າຕົວ ຫລື ບັນລຸໄດ້ 2.2 ຕື້ໂດລາສະຫະລັດ ໃນປີ 2015 ທຽບໃສ່ປີ 2010.

ການຕັ້ງເປົ້າໝາຍ ການຄ້າສອງຝ່າຍ ສຳລັບປີ 2015 ໃຫ້ບັນລຸມູນຄ່າ 5.77 ຕື້ໂດລາສະຫະລັດ, ເຫັນວ່າມີຄວາມສາມາດທີ່ຈະເປັນໄປໄດ້. ເນື່ອງຈາກ ເສດຖະກິດລາວ ໄດ້ສືບຕໍ່ຂະຫຍາຍຕົວດ້ວຍອັດຕາການເຕີບໂຕສູງກວ່າ 8 ເປີເຊັນ, ໂດຍສະເພາະແມ່ນໃນຂົງເຂດບໍ່ແຮ່, ພະລັງງານໄຟຟ້າ, ການກໍ່ສ້າງພື້ນຖານໂຄງລ່າງ, ການບໍລິການ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ.

| HSC | Product descriptions | Lao PDR's exports to Thailand<br><br>(in thousand US dollars) | | | |
|---|---|---|---|---|---|
| | | 2009 | 2010 | 2011 | 6m / 2012 |
| 7403.11 | Copper cathodes and sections of cathodes unwrought | 229,015 | 308,792 | 498,936 | 284,816 |
| 2716.00 | Electrical energy | 92,799 | 272,069 | 455,901 | 224,219 |
| 4407.99 | Lumber, non-coniferous nes | 42,533 | 35,705 | 35,573 | 21,048 |
| 1005.90 | Maize (corn) nes | 19,888 | 19,757 | 20,747 | 16,948 |
| 2701.19 | Coal nes, whether or not pulverized but not agglomerated | 9,859 | 12,256 | 12,486 | 7,193 |
| 3105.90 | Fertilizers nes, in packages not exceeding 10 kg | 0 | 1,040 | 9,601 | 2,836 |
| 0704.90 | Cabbages, kohlrabi, sim edible brassicas nes, fresh/chilled | 2,931 | 4,357 | 9,402 | 3,421 |
| 4407.29 | Lumber, tropical hardwood nes, sawn lengthwise >6mm | 7,505 | 9,202 | 9,041 | 7,058 |
| 8544.30 | Ignition wirg sets&oth wirg sets usd in vehicles,aircraft etc | 5,130 | 10,163 | 8,224 | 4,269 |
| 1202.20 | Ground-nuts shelld, whether or not broken, not roastd | 1,845 | 915 | 5,412 | 0 |

***Source**: International Trade Center. www.trademap.org*

| HSC | Product descriptions | Lao PDR's imports from Thailand<br><br>(in thousand US dollars) | | | |
|---|---|---|---|---|---|
| | | 2009 | 2010 | 2011 | 6m 2012 |
| 2710.19 | Light petroleum distillates nes | 244,252 | 346,534 | 506,440 | 369,770 |
| 2710.11 | Aviation spirit | 81,833 | 115,142 | 164,326 | 0 |
| 8703.33 | Automobiles with diesel engine displacing more than 2500 cc | 47,563 | 65,086 | 66,668 | 44,057 |
| 2716.00 | Electrical energy | 58,045 | 102,057 | 65,811 | 39,338 |
| 0207.14 | Fowls (gallus domesticus), cuts & offal, frozen | 0 | 15,101 | 64,492 | 28,210 |
| 8703.32 | Automobiles with diesel engine displacing > 1500 cc - 2500 cc | 42,790 | 53,594 | 51,715 | 7,137 |
| 8429.52 | Shovels and excavators with a 360 revolving superstructure | 24,553 | 30,429 | 50,269 | 27,284 |
| 8704.10 | Dump trucks designed for off-highway use | 8,612 | 9,884 | 40,730 | 6,089 |
| 2202.90 | Non-alcoholic beverages nes,excludg fruit/veg juices of headg 20.09 | 37,391 | 26,676 | 38,552 | 34,853 |
| 8701.90 | Wheeled tractors nes | 8,605 | 18,076 | 36,749 | 20,926 |

ແຜນການພັດທະນາດັ່ງກ່າວ ແມ່ນສວນກະແສການປ່ຽນແປງຂອງເສດຖະກິດໂລກ, ໂດຍຍັງຄົງມີຜົນກະທົບຈາກວິກິດການເສດຖະກິດໃນຂົງເຂດເອີຣົບ. ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ ຈະປະກອບສ່ວນຢ່າງຫລວງຫລາຍໃຫ້ແກ່ການເພີ່ມຂຶ້ນຂອງ ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ. ລັກສະນະທາງດ້ານພູມສາດຂອງປະເທດລາວ ແລະ ບັນດາປັດໃຈອຳນວຍຄວາມສະດວກອື່ນໆ ເຊິ່ງລວມທັງການຄົມມະນາຄົມຂົນສົ່ງ ແລະ ການປະຕິບັດບັນດາຫລັກການຕ່າງໆ, ຄວາມຕ້ອງການ ແລະ ການສະໜອງສິນຄ້າ ແລະ ການບໍລິການ ສ່ວນໃຫຍ່ແມ່ນຕິດພັນກັບການນຳເຂົ້າ ແລະ ສົ່ງອອກ ຂອງປະເທດໄທ. ຍິ່ງໄປກວ່ານັ້ນ, ບັນດາແຂວງຂອງລາວ ທີ່ມີຊາຍແດນຕິດຈອດກັບໄທ ຍັງມີການຈັດກອງປະຊຸມພົບປະແລກປ່ຽນບົດຮຽນຕ່າງໆ ລະຫວ່າງພາກລັດຂອງສອງປະເທດ ຢ່າງເປັນປະຈຳ ມີການຈັດງານວາງສະແດງສິນຄ້າ ແລະ ຈັດກອງປະຊຸມເພື່ອຮັດແໜ້ນການຮ່ວມມືໃນຂົງເຂດເສດຖະກິດ ລະຫວ່າງແຂວງ ແລະ ຈັງຫວັດ, ມີຄວາມເປັນທ່ອງເປັນໄຍຂອງອຳນາດການປົກຄອງທ້ອງຖິ່ນຂອງສອງປະເທດ, ເພື່ອຊ່ວຍເຫລືອພັດທະນາທາງ

ດ້ານການຄ້າ. ຍິ່ງໄປກວ່ານັ້ນ, ການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນຂອງ ສປປ ລາວ ໃນປີ 2015 ແລະ ການສ້າງຂົວມິດຕະພາບເຊື່ອມຕໍ່ລະຫວ່າງບັນດາແຂວງຕ່າງໆຂອງ ສປປ ລາວ ແລະ ລາຊະອານາຈັກໄທ ຈະສ້າງສິ່ງອຳນວຍຄວາມສະດວກໃນການເຊື່ອມຕໍ່ເພື່ອຂົນສົ່ງສິນຄ້າ ພາຍໃຕ້ຫົວຂໍ້ "ຕະຫລາດດຽວ". ທັງໝົດນັ້ນ, ໄດ້ກາຍເປັນຂີດໝາຍສຳຄັນ ທີ່ຈະເຮັດໃຫ້ ເປົ້າໝາຍການຮ່ວມມືການຄ້າຂອງສອງປະເທດລາວ-ໄທ ຈະສາມາດບັນລຸໄດ້ 5.77 ຕື້ໂດລາສະຫະລັດ ໃນປີ 2015 ຢ່າງແນ່ນອນ.

ເຖິງຢ່າງໃດກໍ່ຕາມ, ເພື່ອເປັນການຊຸກຍູ້ການສົ່ງອອກຂອງ ສປປ ລາວ ໄປລາຊະອານາຈັກໄທ ໃຫ້ຂຶ້ນ 3 ເທົ່າ ຫລື ທຽບເທົ່າມູນຄ່າ 2.2 ຕື້ໂດລາສະຫະລັດ ຍັງເປັນສິ່ງທ້າທາຍ ທີ່ທັງສອງປະເທດຕ້ອງໄດ້ເອົາໃຈໃສ່ບຸກບືນ. ແຕ່ກົງກັນຂ້າມ ການນຳເຂົ້າຈາກໄທ, ເຊິ່ງການສົ່ງອອກຂອງລາວໄປໄທ ສ່ວນໃຫຍ່ເປັນວັດຖຸດິບ ທີ່ຜ່ານຂະບວນການປຸງແຕ່ງໃນຂັ້ນພື້ນຖານ ໂດຍສະເພາະຜະລິດຕະພັນແຮ່ທາດ (ທອງແດງ, ຖ່ານຫີນ), ຜະລິດຕະພັນໄມ້, ແລະ ອື່ນໆ.... ນອກຈາກນັ້ນ, ສປປ ລາວ ຈະໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ໃນຕົ້ນປີ 2013 ຕະຫລາດສົ່ງອອກຂອງລາວ ຈະມີການຂະຫຍາຍຕົວກວ້າງອອກຕື່ມ, ເຊິ່ງໝາຍຄວາມວ່າ ຜູ້ສົ່ງອອກຈະບໍ່ຖືກຈຳກັດຢູ່ພຽງຕະຫລາດດຽວ ແຕ່ພວກເຂົາຈະສາມາດເລືອກເຟັ້ນຕະຫລາດສົ່ງອອກ ເພື່ອໄດ້ຜົນຕອບແທນ ຫລື ກຳໄລທີ່ສູງກວ່າ. ເຖິງຢ່າງໃດກໍ່ຕາມ ບໍ່ໄດ້ໝາຍຄວາມວ່າ ສ ປປລາວ ຈະບໍ່ສາມາດບັນລຸເປົ້າໝາຍສົ່ງອອກໄປໄທຕາມຄາດໝາຍ. ແຕ່ມັນຮຽກຮ້ອງໃຫ້ສອງປະເທດຕ້ອງໄດ້ເຮັດວຽກໜັກຕື່ມ ໃນການປຶກສາຫາລືຢ່າງໃກ້ຊິດ ເພື່ອຊອກຫາມາດຕະການສະໜັບສະໜູນການຄ້າທີ່ເໝາະສົມ ແລະ ການປະຕິບັດຕາມບັນດາສັນຍາ ແລະ ຂໍ້ຕົກລົງຕ່າງໆ ລະຫວ່າງສອງປະເທດ, ໂດຍສະເພາະ ບັນດາຂໍ້ຕົກລົງພາຍໃຕ້ສັນຍາອາຊຽນ ແລະ ອົງການການຄ້າໂລກ. ທັງນີ້ ກໍ່ເພື່ອຮັບປະກັນໃຫ້ການພັດທະນາສາຍພົວພັນການຄ້າ ລະຫວ່າງລາວ-ໄທ ທີ່ມີມາແຕ່ດົນນານໃຫ້ມີຄວາມໝັ້ນຄົງ ແລະ ສ້າງບົດຮຽນທີ່ມີຄຸນຄ່າສູງຂຶ້ນ.

## ແຫລ່ງຂໍ້ມູນ

http://laoftpd.com/index.php?option=com_content&view=article&id=109%